ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1058 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 05 DEC 2016

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງທຸລະກິດການໃຫ້ບໍລິການໂອນເງິນ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 08 ທັນວາ 2008;
- ອີງຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມການຄົ້ນຄວ້າ ແລະ ນໍາສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ເຄື່ອນໄຫວ ແລະ ການຄຸ້ມຄອງທຸລະກິດການໃຫ້ບໍລິການໂອນເງິນ ທີ່ໃຫ້ບໍລິການໂອນເງິນ ທັງພາຍໃນປະເທດ ແລະ ລະຫວ່າງປະເທດ ໃຫ້ມີປະສິດທິພາບ, ປອດໄພ, ໂປ່ງໃສ ແລະ ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແນ່ໃສ່ຫຼຸດຜ່ອນຄວາມສ່ຽງ ທີ່ເກີດຈາກການຊໍາລະເງິນ ແລະ ເພີ່ມສະຖຽນລະພາບທາງດ້ານລະບົບການເງິນ.

**ມາດຕາ 2 ທຸລະກິດການໃຫ້ບໍລິການໂອນເງິນ**

ທຸລະກິດການໃຫ້ບໍລິການໂອນເງິນ ແມ່ນການດໍາເນີນທຸລະກິດໃນການໃຫ້ບໍລິການທາງດ້ານການເງິນ ກ່ຽວກັບທຸລະກໍາການໂອນເງິນ ທັງພາຍໃນປະເທດ ແລະ ລະຫວ່າງປະເທດ ໂດຍຜ່ານຜູ້ໃຫ້ບໍລິການໂອນເງິນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການໃຫ້ບໍລິການໂອນເງິນ ໝາຍເຖິງ:** ການບໍລິການທາງດ້ານການເງິນ ເຊັ່ນ: ການຮັບ ເງິນສົດ, ເຄື່ອງມືທາງດ້ານການເງິນ ຫຼື ການຫັກເງິນໃນບັນຊີເງິນຝາກ ເພື່ອດຳເນີນການໂອນເງິນ ດ້ວຍວິທີການໂອນທາງເອເລັກໂຕຣນິກ ຜ່ານລະບົບທະນາຄານ ຫຼື ວິທີການອື່ນ ເປັນຕົ້ນ ການສື່ສານ, ການໃຊ້ຂໍ້ຄວາມ, ການໂອນ ຫຼື ຜ່ານເຄືອຄ່າຍການຊຳລະສະສາງບັນຊີ ທີ່ເປັນສ່ວນໜຶ່ງໃນການສະໜອງການໃຫ້ບໍລິການໂອນເງິນຂອງຜູ້ໃຫ້ບໍລິການໂອນເງິນ;
2. **ຜູ້ໃຫ້ບໍລິການໂອນເງິນ ໝາຍເຖິງ:** ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອໃຫ້ບໍລິການໂອນເງິນ ຫຼື ມູນຄ່າເງິນ ໃນ ສປປ ລາວ ຕາມຂໍ້ຕົກລົງສະບັບນີ້;
3. **ຕົວແທນ ໝາຍເຖິງ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ເປັນຕົວແທນຈາກຜູ້ໃຫ້ບໍລິການໂອນເງິນ ແລະ ໄດ້ຮັບການເຫັນດີຈາກ ທະນາຄານແຫ່ງ ສປປ ລາວ ເພື່ອພົວພັນ ແລະ ໃຫ້ບໍລິການ ໂດຍກົງກັບຜູ້ໃຊ້ບໍລິການ;
4. **ຜູ້ໃຊ້ບໍລິການ ໝາຍເຖິງ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໃຊ້ບໍລິການໂອນເງິນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານການໃຫ້ບໍລິການໂອນເງິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ການສ້າງຕັ້ງ ແລະ ການເຄື່ອນໄຫວ ທຸລະກິດການໃຫ້ບໍລິການໂອນເງິນ

**ມາດຕາ 5 ການສ້າງຕັ້ງທຸລະກິດການໃຫ້ບໍລິການໂອນເງິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງທຸລະກິດການໃຫ້ບໍລິການໂອນເງິນ ຕ້ອງຍື່ນຄຳຮ້ອງຜ່ານຂະແໜງອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດນຳທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

ສຳລັບການລົງທຶນຂອງຕ່າງປະເທດ ແມ່ນສາມາດລົງທຶນໄດ້ສູງສຸດບໍ່ເກີນສີ່ສິບສ່ວນຮ້ອຍ (40%) ຂອງທຶນຈົດທະບຽນທັງໝົດ.

**ມາດຕາ 6 ເງື່ອນໄຂຂອງຜູ້ໃຫ້ບໍລິການໂອນເງິນ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດການໃຫ້ບໍລິການໂອນເງິນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທຶນຈົດທະບຽນພຽງພໍຕາມຂໍ້ຕົກລົງສະບັບນີ້ກຳນົດໄວ້ ແລະ ໄດ້ຮັບຄວາມເຊື່ອຖືເປັນທີ່ຍອມຮັບຂອງສັງຄົມ;
2. ມີໂຄງປະກອບຜູ້ຖືຮຸ້ນຂອງຕົນ ທີ່ຈະແຈ້ງ ແລະ ເປັນຈິງ;
3. ມີຄຸນສົມບັດດີ ບໍ່ເຄີຍຕ້ອງໂທດທາງອາຍາໃນສະຖານ ລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ການກະທຳຜິດທາງອາຍາອື່ນ ທີ່ກ່ຽວຂ້ອງທາງດ້ານການເງິນ ແລະ ເງິນຕາ;
4. ມີໃບຢັ້ງຢືນວຸດທິການສຶກສາ ແລະ ປະສົບການທາງດ້ານບໍລິຫານການເງິນ ຫຼື ການບັນຊີ ຢ່າງໜ້ອຍ 2 ປີ.

**ມາດຕາ 7 ການປະກອບເອກະສານສະເໜີຂໍອະນຸຍາດດຳເນີນທຸລະກິດ**

ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດການໃຫ້ບໍລິການໂອນເງິນ ຕ້ອງປະກອບເອກະສານສະເໜີຂໍອະນຸຍາດດຳເນີນທຸລະກິດດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ;
2. ບົດວິພາກເສດຖະກິດ ແລະ ແຜນດຳເນີນທຸລະກິດ 3 ປີທຳອິດ;
3. ເອກະສານຢັ້ງຢືນກ່ຽວກັບແຫຼ່ງທຶນທີ່ຈະນຳມາສ້າງຕັ້ງ ໂດຍປະກອບມີ ໃບລອກກ່າຍບັນຊີຂອງຜູ້ຖືຮຸ້ນ ຊຶ່ງອອກໂດຍທະນາຄານບ່ອນທີ່ເປີດບັນຊີດັ່ງກ່າວ ແລະ ຄຳຊີ້ແຈງກ່ຽວກັບການໄດ້ມາຂອງແຫຼ່ງທຶນດັ່ງກ່າວ ພ້ອມດ້ວຍເອກະສານຢັ້ງຢືນທີ່ກ່ຽວຂ້ອງ;
   - ຜູ້ຖືຮຸ້ນທີ່ເປັນບຸກຄົນ ຕ້ອງປະກອບໃບລອກກ່າຍບັນຊີເງິນຝາກ ຢ່າງໜ້ອຍ 6 ເດືອນຍ້ອນຫຼັງ ທີ່ຢັ້ງຢືນໂດຍທະນາຄານທີ່ກ່ຽວຂ້ອງ;
   - ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງປະກອບໃບລອກກ່າຍບັນຊີເງິນຝາກ ຢ່າງໜ້ອຍ 2 ປີ ຍ້ອນຫຼັງ ທີ່ຢັ້ງຢືນໂດຍທະນາຄານທີ່ກ່ຽວຂ້ອງ ແລະ ໃບແຈ້ງຊັບສິນ-ໜີ້ສິນ.

4. ເອກະສານຢັ້ງຢືນ ລະບົບ ແລະ ກົນໄກ ການໃຫ້ບໍລິການໂອນເງິນ;
5. ຊີວະປະຫວັດ, ສຳເນົາບັດປະຈຳຕົວ, ໃບແຈ້ງໂທດ, ສຳເນົາໃບຢັ້ງຢືນວຸດທິການສຶກສາ ຫຼື ໃບຢັ້ງຢືນປະສົບການ ການເຮັດວຽກຂອງຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດ;
6. ເອກະສານຫຼັກຖານຢັ້ງຢືນແຫຼ່ງທຶນທີ່ຈະນຳມາສ້າງຕັ້ງ ທີ່ຢັ້ງຢືນໂດຍທະນາຄານທີ່ຮັບຝາກແຫຼ່ງທຶນດັ່ງກ່າວ ແລະ ຄຳຊີ້ແຈງກ່ຽວກັບການໄດ້ມາຂອງແຫຼ່ງທຶນດັ່ງກ່າວ ພ້ອມດ້ວຍເອກະສານ ຢັ້ງຢືນທີ່ກ່ຽວຂ້ອງ;
7. ໜັງສືອະນຸຍາດ ຈາກອົງການທີ່ມີສິດອຳນາດໃຫ້ມາສ້າງຕັ້ງຢູ່ ສປປ ລາວ ແລະ ໜັງສືອະນຸຍາດນຳເງິນອອກນອກປະເທດ ຕາມລະບຽບກົດໝາຍຂອງປະເທດກ່ຽວຂ້ອງ (ສຳລັບນັກລົງທຶນຕ່າງປະເທດ);
8. ແຜນວາດ, ຮູບພາບ ແລະ ໃບຢັ້ງຢືນ ທີ່ຕັ້ງສຳນັກງານທີ່ເຊັນຢັ້ງຢືນ ຈາກອົງການປົກຄອງບ້ານບ່ອນທີ່ສຳນັກງານຕັ້ງຢູ່ (ກໍລະນີ ເຊົ່າຫ້ອງການ ແມ່ນໃຫ້ປະກອບສັນຍາເຊົ່າຄັດຕິດ);
9. ກົດລະບຽບພາຍໃນ ກ່ຽວກັບການໃຫ້ບໍລິການໂອນເງິນ;
10. ໃບຢັ້ງຢືນຮັບເງິນ ຈາກກົມບໍລິການ ທະນາຄານແຫ່ງ ສປປ ລາວ ຄ່າທຳນຽມຍື່ນເອກະສານຂໍອະນຸຍາດດຳເນີນທຸລະກິດ ຈຳນວນໜຶ່ງລ້ານກີບ (1.000.000 ກີບ) ຫຼື ຕາມການປ່ຽນແປງຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
11. ປະຫວັດຫຍໍ້ຂອງບໍລິສັດ (ກໍລະນີ ທີ່ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ມາກ່ອນ);
12. ເອກະສານອະນຸຍາດ ແລະ ສັນຍາການເປັນຕົວແທນໃຫ້ບໍລິການໂອນເງິນ ຈາກບໍລິສັດທີ່ເປັນເຈົ້າຂອງລະບົບຢູ່ຕ່າງປະເທດ ທັງສະບັບ ພາສາລາວ ແລະ ພາສາອັງກິດ (ກໍລະນີ ຂໍອະນຸຍາດເປັນຕົວແທນຂອງບໍລິສັດທີ່ຢູ່ຕ່າງປະເທດ);
13. ໃບມອບສິດທະໃຫ້ແກ່ຜູ້ທີ່ມາພົວພັນວຽກນຳ ທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ລົງທຶນບໍ່ໄດ້ມາພົວພັນຍື່ນເອກະສານຂໍອະນຸຍາດດຳເນີນທຸລະກິດດ້ວຍຕົນເອງ).

**ມາດຕາ 8 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບຜົນການຄົ້ນຄວ້າ ພາຍໃນກຳນົດເວລາ 60 ວັນ ລັດຖະການ ນັບແຕ່ວັນໄດ້ຮັບສຳນວນເອກະສານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ກໍລະນີ ທີ່ເອກະສານຂໍອະນຸຍາດດໍາເນີນທຸລະກິດ ບໍ່ຖືກຕ້ອງ ແລະ ຄົບຖ້ວນ ຜູ້ຂໍອະນຸຍາດດໍາເນີນທຸລະກິດຕ້ອງໄດ້ມີການປັບປຸງ ແລະ ປະກອບເອກະສານເພີ່ມເຕີມ ພາຍໃນກໍານົດເວລາ 15 ວັນ ລັດຖະການ.

ກໍລະນີ ການປັບປຸງ ແລະ ປະກອບເອກະສານເພີ່ມເຕີມ ເກີນກໍານົດເວລາທີ່ໄດ້ກໍານົດໄວ້ໃນວັກທີ 2 ຂອງມາດຕານີ້ ທະນາຄານແຫ່ງ ສປປ ລາວ ຈະບໍ່ພິຈາລະນາ ແລະ ນໍາສົ່ງເອກະສານທັງໝົດຄືນໃຫ້ແກ່ຜູ້ຮ້ອງຂໍ.

**ມາດຕາ 9 ອາຍຸການໃບອະນຸຍາດດໍາເນີນທຸລະກິດການໃຫ້ບໍລິການໂອນເງິນ**

ອາຍຸການຂອງໃບອະນຸຍາດດໍາເນີນທຸລະກິດການໃຫ້ບໍລິການໂອນເງິນ ແມ່ນ 1 ປີ ນັບແຕ່ວັນທີ່ໄດ້ຮັບການອະນຸຍາດໃຫ້ດໍາເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ. ກໍລະນີ ທີ່ມີຈຸດປະສົງຕໍ່ອາຍຸຂອງໃບອະນຸຍາດດໍາເນີນທຸລະກິດ ຈະຕ້ອງໄດ້ຍື່ນສໍານວນຄໍາຮ້ອງຕໍ່ ທະນາຄານແຫ່ງ ສປປ ລາວ ພາຍໃນກໍານົດເວລາ 30 ວັນ ລັດຖະການ ກ່ອນວັນໝົດອາຍຸໃບອະນຸຍາດດັ່ງກ່າວ.

ການຄົ້ນຄວ້າ ແລະ ພິຈາລະນາ ການຕໍ່ອາຍຸຂອງໃບອະນຸຍາດດໍາເນີນທຸລະກິດ ແມ່ນ 15 ວັນ ລັດຖະການ (ຍົກເວັ້ນຜູ້ໃຫ້ບໍລິການໂອນເງິນທີ່ເປັນຕົວແທນຂອງບໍລິສັດຕ່າງປະເທດ ທີ່ເອກະສານອະນຸຍາດເປັນຕົວແທນ ແລະ ສັນຍາການເປັນຕົວແທນນັ້ນໄດ້ໝົດອາຍຸການນໍາໃຊ້).

**ມາດຕາ 10 ທຶນຈົດທະບຽນ**

ການດໍາເນີນທຸລະກິດການໃຫ້ບໍລິການໂອນເງິນ ຜູ້ໃຫ້ບໍລິການໂອນເງິນ ຕ້ອງມີທຶນຈົດທະບຽນຕໍ່າສຸດ ຫ້າຮ້ອຍລ້ານກີບ (500.000.000 ກີບ).

ການນໍາເຂົ້າທຶນຈົດທະບຽນຂອງຜູ້ລົງທຶນຕ່າງປະເທດໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການຂະຫຍາຍຕົວແທນ**

ຜູ້ໃຫ້ບໍລິການໂອນເງິນ ສາມາດຂະຫຍາຍຕົວແທນໄດ້ ໃນກໍລະນີ ທີ່ມີຄວາມພ້ອມ ແລະ ມີກົດລະບຽບພາຍໃນການຄຸ້ມຄອງຕົວແທນ ທີ່ຮັດກຸມ ແລະ ຕ້ອງໄດ້ຮັບການເຫັນດີຈາກ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 12 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການໂອນເງິນ**

ຜູ້ໃຫ້ບໍລິການໂອນເງິນ ມີສິດ ແລະ ພັນທະ ດັ່ງນີ້:

1. ດໍາເນີນທຸລະກິດການໃຫ້ບໍລິການໂອນເງິນ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ປອດໄພ;
2. ຕິດຕາມ ແລະ ກວດກາຄວາມສ່ຽງຕ່າງໆ ທີ່ອາດເກີດຂຶ້ນ ເປັນຕົ້ນ ຄວາມສ່ຽງທີ່ຕິດພັນກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ແກ້ໄຂຂໍ້ຂັດແຍ່ງການຮ້ອງຟ້ອງຂອງລູກຄ້າ ແລະ ລາຍງານໃຫ້ ທະນາຄານແຫ່ງ ສປປ ລາວ ຊາບໃນແຕ່ລະໄລຍະ ເພື່ອເປັນມາດຕະການໃນການປົກປ້ອງຜູ້ບໍລິໂພກ;
4. ຮັກສາ ແລະ ປ້ອງກັນ ການສູນເສຍຂໍ້ມູນໃນການບໍລິການໂອນເງິນ ແລະ ຮັບປະກັນວ່າມີລະບົບສໍາຮອງໄວ້ ແລະ ມີແຜນຈັດຕັ້ງປະຕິບັດເມື່ອມີເຫດການສຸກເສີນ ຫຼື ບໍ່ສາມາດຄາດຄະເນໄດ້ ເຊັ່ນ: ນໍ້າຖ້ວມ ແລະ ອັກຄີໄພ ທີ່ເກີດຈາກໄພທໍາມະຊາດ.
5. ທຸກການປ່ຽນແປງການເຄື່ອນໄຫວດໍາເນີນທຸລະກິດ ຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ;
6. ກໍລະນີ ຜູ້ໃຫ້ບໍລິການໂອນເງິນ ຖືກຍຸບເລີກ ຫຼື ສິ້ນສຸດສັນຍາການເປັນຕົວແທນຈາກບໍລິສັດ ທີ່ເປັນເຈົ້າຂອງລະບົບຢູ່ຕ່າງປະເທດ ຕ້ອງໄດ້ລາຍງານ ຢ່າງເປັນລາຍລັກອັກສອນ ມາຍັງ ທະນາຄານແຫ່ງ ສປປ ລາວ ພາຍໃນ 10 ວັນ ລັດຖະການ, ຊຶ່ງຜູ້ໃຫ້ບໍລິການໂອນເງິນ ແລະ ຕົວແທນ

ຂອງຕົນ ຕ້ອງໄດ້ຢຸດເຊົາການໃຫ້ບໍລິການ ຫຼື ການດຳເນີນທຸລະກິດດັ່ງກ່າວ ໂດຍທັນທີ ນັບແຕ່ວັນທີ່ຖືກຍຸບເລີກ ຫຼື ສັນຍາການເປັນຕົວແທນນັ້ນ ໄດ້ສິ້ນສຸດລົງ (ກໍລະນີ ເປັນຕົວແທນບໍລິສັດທີ່ຢູ່ຕ່າງປະເທດ).

**ມາດຕາ 13 ສິດ ແລະ ພັນທະຂອງຕົວແທນ**

ຕົວແທນ ມີສິດ ແລະ ພັນທະ ດັ່ງນີ້:

1. ບໍລິການໂອນເງິນ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ປອດໄພ;
2. ຕິດຕາມ ແລະ ກວດກາຄວາມສ່ຽງຕ່າງໆ ທີ່ອາດເກີດຂຶ້ນ ເປັນຕົ້ນ ຄວາມສ່ຽງທີ່ຕິດພັນກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ຮັກສາ ແລະ ປ້ອງກັນ ການສູນເສຍຂໍ້ມູນໃນການບໍລິການໂອນເງິນ;
4. ທຸກການປ່ຽນແປງການເຄື່ອນໄຫວດຳເນີນທຸລະກິດ ຕ້ອງໄດ້ຮັບອະນຸຍາດຈາກຜູ້ໃຫ້ບໍລິການໂອນເງິນ ແລະ ໄດ້ຮັບການເຫັນດີຈາກ ທະນາຄານແຫ່ງ ສປປ ລາວ;
5. ປະຕິບັດສິດ ແລະ ພັນທະອື່ນ ຕາມກົດລະບຽບພາຍໃນ ແລະ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 14 ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ທີ່ໃຊ້ບໍລິການໂອນເງິນ ຈະຕ້ອງປະຕິບັດຕາມຂໍ້ກຳນົດກົດລະບຽບ ແລະ ຂັ້ນຕອນຕ່າງໆ ທີ່ຜູ້ໃຫ້ບໍລິການໂອນເງິນວາງອອກຢ່າງເຂັ້ມງວດ ເຊັ່ນ: ການປະຕິບັດຕາມຄຳແນະນຳໃນການເຮັດທຸລະກຳການໃຫ້ບໍລິການໂອນເງິນ, ການຮັກສາລະຫັດລັບຂອງຕົນ ແລະ ຂັ້ນຕອນອື່ນໆ ເພື່ອຮັບປະກັນຄວາມປອດໄພໃນການດຳເນີນທຸລະກຳທາງດ້ານການເງິນຂອງຕົນ.

**ມາດຕາ 15 ການໂອນເງິນ ພາຍໃນປະເທດ ແລະ ລະຫວ່າງປະເທດ**

ການໂອນເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ແມ່ນໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 16 ການກວດກາ ແລະ ຄຸ້ມຄອງ ພາຍໃນຂອງຜູ້ໃຫ້ບໍລິການໂອນເງິນ**

ຜູ້ໃຫ້ບໍລິການໂອນເງິນ ຕ້ອງມີການກວດກາ ແລະ ຄຸ້ມຄອງພາຍໃນ ດັ່ງນີ້:

1. ມີການຕິດຕາມກວດກາ ແລະ ຄວບຄຸມ ພາຍໃນ ລວມທັງລະບົບລາຍງານການເຮັດທຸລະກຳຂອງຕົນເອງ ແລະ ຕົວແທນ;
2. ມີແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ ເຊັ່ນ: ການເກັບຮັກສາຂໍ້ມູນ, ການສຳຮອງຂໍ້ມູນ, ການກູ້ຄືນຂໍ້ມູນ ແລະ ອື່ນໆ;
3. ມີມາດຕະການໃນການຮັກສາຄວາມປອດໄພ ເພື່ອຕ້ານ ແລະ ສະກັດກັ້ນ ການສໍ້ໂກງໃນການເຮັດທຸລະກຳ, ການໂຈລະກຳຂໍ້ມູນ ແລະ ອື່ນໆ;
4. ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງຂະແໜງການເງິນກ່ຽວກັບການບໍລິການໂອນເງິນ ທີ່ທະນາຄານແຫ່ງ ສປປ ລາວ ແລະ ຂະແໜງການທີ່ກ່ຽວຂ້ອງ ວາງອອກໃນແຕ່ລະໄລຍະ.

**ມາດຕາ 17 ມາດຕະການກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ຜູ້ໃຫ້ບໍລິການໂອນເງິນ ແລະ ຕົວແທນ ຕ້ອງປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ການຊອກຮູ້

ລູກຄ້າ, ການເພີ່ມທະວີການເອົາໃຈໃສ່ລູກຄ້າ, ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ປະຕິບັດຕາມລະບຽບການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 18 ຄ່າທຳນຽມປະຈຳປີ**

ຜູ້ໃຫ້ບໍລິການໂອນເງິນ ຕ້ອງເສຍຄ່າທຳນຽມປະຈຳປີໃຫ້ ທະນາຄານແຫ່ງ ສປປ ລາວ ຈຳນວນ 0,02% ຂອງຊັບສິນ ສະເລ່ຍ ແລະ ໃຫ້ຊຳລະພາຍໃນເດືອນ ມັງກອນ ຂອງປີຖັດໄປ.

**ມາດຕາ 19 ຂໍ້ຫ້າມ**

ຫ້າມຜູ້ໃຫ້ບໍລິການໂອນເງິນ ເຄື່ອນໄຫວດຳເນີນທຸລະກຳ ດັ່ງນີ້:

1. ດຳເນີນທຸລະກຳອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ;
2. ກຳນົດເງື່ອນໄຂພິເສດໃຫ້ແກ່ຜູ້ໃຊ້ບໍລິການ ເພື່ອໃຊ້ບໍລິການຂອງຕົນ;
3. ຂະຫຍາຍຕົວແທນ ໂດຍບໍ່ໄດ້ຮັບການເຫັນດີຈາກ ທະນາຄານແຫ່ງ ສປປ ລາວ;
4. ເຄື່ອນໄຫວດຳເນີນທຸລະກິດຕ່າງໆ ທີ່ຂັດກັບລະບຽບກົດໝາຍຂອງ ສປປ ລາວ.

ຫ້າມບໍ່ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນທຸລະກິດ ຫຼື ໃຫ້ບໍລິການໂອນເງິນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

## ໝວດທີ 3
## ການຄຸ້ມຄອງ, ການກວດກາ ແລະ ການລາຍງານ

**ມາດຕາ 20 ອົງການຄຸ້ມຄອງ ແລະ ກວດກາ**

ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນຜູ້ຄຸ້ມຄອງ ແລະ ກວດກາ ຢ່າງລວມສູນກ່ຽວກັບ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງຜູ້ໃຫ້ບໍລິການໂອນເງິນ.

**ມາດຕາ 21 ການລາຍງານຂອງຜູ້ໃຫ້ບໍລິການໂອນເງິນ**

ຜູ້ໃຫ້ບໍລິການໂອນເງິນ ຕ້ອງປະຕິບັດການລາຍງານການເຄື່ອນໄຫວດຳເນີນທຸລະກິດໃຫ້ ທະນາຄານແຫ່ງ ສປປ ລາວ ຕາມລະບຽບການທີ່ກຳນົດໄວ້ ໃນແຕ່ລະໄລຍະ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ ແລະ ສັງຄົມ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ, ປັບໃໝ ແລະ ລົງວິໄນ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

ໝວດທີ 5

ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ, ກົມທີ່ກ່ຽວຂ້ອງຂອງ ທະນາຄານແຫ່ງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຜູ້ໃຫ້ບໍລິການໂອນເງິນ, ຕົວແທນ ແລະ ຜູ້ໃຊ້ບໍລິການ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ກໍລະນີ ຈຳເປັນຕ້ອງມີການປັບປຸງບາງເນື້ອໃນຫຼັກການ ເພື່ອໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະນັ້ນ ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ ເປັນຜູ້ອອກ ຄຳແນະນຳ, ບົດແນະນຳ, ແຈ້ງການ ຫຼື ລະບຽບການໃດໜຶ່ງ ເພື່ອປັບປຸງ, ເພີ່ມເຕີມ ແລະ ແກ້ໄຂບັນຫາດັ່ງກ່າວ ໃຫ້ທັນກັບສະພາບການ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 15 ວັນ ນັບແຕ່ວັນລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ດຣ ສົມພາວ ໄຟສິດ